ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====----

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 10 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 27 ເມສາ 2017

# ຂໍ້ຕົກລົງ

## ວ່າດ້ວຍ ການກຳນົດອັດຕາຄ່າທຳນຽມ ການຊື້-ຂາຍ ແລະ ການໂອນ ຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການໂອນຮຸ້ນ ສະບັບເລກທີ 0025/ຄຄຊ, ລົງວັນທີ 26 ຕຸລາ 2016;
- ອີງຕາມ ລະບຽບວ່າດ້ວຍ ການຄຸ້ມຄອງການຊື້-ຂາຍຮຸ້ນ ທາງອິນເຕີເນັດ ຢູ່ ສປປ ລາວ ສະບັບເລກທີ 001/ຄຄຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ບົດບັນທຶກກອງປະຊຸມຄະນະກຳມະການຄຸ້ມຄອງຫຼັກຊັບ ຄັ້ງທີ I ປະຈຳປີ 2017 ສະບັບເລກທີ 09/ຄຄຊ, ລົງວັນທີ 05 ເມສາ 2017.

## ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

**ມາດຕາ 1** ກຳນົດອັດຕາຄ່າທຳນຽມການຊື້-ຂາຍ ແລະ ການໂອນ ຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ຂອງແຕ່ລະພາກສ່ວນ ມີດັ່ງລຸ່ມນີ້:

1. ອັດຕາຄ່າທຳນຽມການຊື້-ຂາຍຮຸ້ນຈົດທະບຽນ

1.1. ອັດຕາຄ່າທຳນຽມການຊື້-ຂາຍຮຸ້ນຈົດທະບຽນ ແບບປົກກະຕິ

| ພາກສ່ວນທີ່ເກັບຄ່າທຳນຽມ | ອັດຕາຄ່າທຳນຽມ | | ລວມ |
|---|---|---|---|
| | ຊື້ | ຂາຍ | |
| ລັດຖະບານ | 0.00% | 0.30% | 0.30% |
| ສຳນັກງານ ຄຄຊ | 0.04% | 0.04% | 0.08% |
| ຕະຫຼາດຫຼັກຊັບລາວ | 0.15% | 0.15% | 0.30% |
| ບໍລິສັດຫຼັກຊັບ | 0.15% | 0.15% | 0.30% |
| ກອງທຶນປ້ອງກັນຄວາມສ່ຽງ | 0.01% | 0.01% | 0.02% |
| ລວມ | 0.35% | 0.65% | 1.00% |



ຄະນະກຳມະການຄຸ້ມຄອງຫຼັກຊັບ, ບ້ານເພຍວັດ, ໜ່ວຍ 6, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ
ຕູ້ໄປສະນີ 19 ໂທລະສານ : (856)-21-21 7806 ໂທລະສັບ : (856)-21-217770 E-mail: lsco@lsc.gov.la

1.2. ອັດຕາຄ່າທຳນຽມການຊື້-ຂາຍຮຸ້ນຈົດທະບຽນ ແບບຜ່ານທາງອິນເຕີເນັດ (HTS)

| ພາກສ່ວນທີ່ເກັບຄ່າທຳນຽມ | ອັດຕາຄ່າທຳນຽມໃໝ່ | | ລວມ |
|---|---|---|---|
| | ຊື້ | ຂາຍ | |
| ລັດຖະບານ | 0.000% | 0.300% | 0.300% |
| ສຳນັກງານ ຄຄຊ | 0.036% | 0.036% | 0.072% |
| ຕະຫຼາດຫຼັກຊັບລາວ | 0.135% | 0.135% | 0.270% |
| ບໍລິສັດຫຼັກຊັບ | 0.135% | 0.135% | 0.270% |
| ກອງທຶນປ້ອງກັນຄວາມສ່ຽງ | 0.010% | 0.010% | 0.020% |
| ລວມ | 0.316% | 0.616% | 0.932% |

2. ອັດຕາຄ່າທຳນຽມການໂອນຮຸ້ນຈົດທະບຽນ

| ພາກສ່ວນທີ່ເກັບຄ່າທຳນຽມ | ຕາມສັນຍາ | ຕາມຄຳຕັດສິນ ຫຼື ພິພາກສາ ຂອງສານ | ຕາມການຮ້ອງຂໍ | ຕາມການສືບທອດມູນມໍລະດົກ ຫຼື ເສຍຊີວິດ |
|---|---|---|---|---|
| ລັດຖະບານ | 0.30% | 0.30% | 0.30% | 0.00% |
| ສຳນັກງານ ຄຄຊ | 0.08% | 0.08% | 0.08% | 0.04% |
| ຕະຫຼາດຫຼັກຊັບລາວ | 0.30% | 0.30% | 0.30% | 0.15% |
| ບໍລິສັດຫຼັກຊັບ | 0.30% | 0.30% | 0.30% | 0.15% |
| ກອງທຶນປ້ອງກັນຄວາມສ່ຽງ | 0.02% | 0.02% | 0.02% | 0.01% |
| ລວມ | 1.00% | 1.00% | 1.00% | 0.35% |

ມາດຕາ 2 ສຳນັກງານ ຄຄຊ, ຕະຫຼາດຫຼັກຊັບລາວ, ບໍລິສັດຫຼັກຊັບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

ມາດຕາ 3 ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງວ່າດ້ວຍການກຳນົດອັດຕາຄ່າທຳນຽມການຊື້-ຂາຍຮຸ້ນ ແລະ ການໂອນຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ ສະບັບເລກທີ 032/ຄຄຊ, ລົງວັນທີ 31 ສິງຫາ 2015.

ປະທານ

ສົມດີ ດວງດີ